ກະຊວງ ສຶກສາ ຣັດ NSW

Notice of expulsion - unsatisfactory participation in learning for students aged 17 years and over

Using the telephone interpreter service to contact the school

# ການແຈ້ງການໄລ່ອອກ - ການມີສ່ວນຮ່ວມ ໃນການຮຽນຮູ້ທີ່ບໍ່ເປັນທີ່ພໍໃຈສໍາລັບ ນັກຮຽນທີ່ມີອາຍຸ 17 ປີຂຶ້ນໄປ

## ໃຊ້ບໍລິການນາຍພາສາທາງໂທລະສັບເພື່ອຕິດຕໍ່ໂຮງຮຽນ

ຊື່ນັກຮຽນ
Name of student

ຊື່ພໍ່ແມ່/ຜູ້ດູແລ ທີ່ຮັກແພງ

ຈົດໝາຍທີ່ຄັດຕິດມາໄດ້ອະທິບາຍລາຍລະອຽດຂອງການແຈ້ງການໄລ່ອອກ - ການມີສ່ວນຮ່ວມໃນການຮຽນຮູ້ທີ່ບໍ່ເປັນທີ່ພໍໃຈທີ່ຂ້າພະເຈົ້າໄດ້ອອກໃຫ້ລູກຂອງທ່ານໂດຍສອດຄ່ອງກັບນະໂຍບາຍຄວາມປະພຶດນັກຮຽນຂອງກະຊວງສຶກສາຂອງ ຣັດ NSW ແລະ ຂັ້ນຕອນການສັ່ງພັກຮຽນ ແລະ ການໄລ່ອອກ.

ລູກຂອງທ່ານຈະບໍ່ສາມາດກັບຄືນໄປໂຮງຮຽນນີ້ໂດຍບໍ່ມີການອະນຸຍາດຈາກທ່ານຄູໃຫຍ່. ມັນເປັນຄວາມຮັບຜິດຊອບຂອງທ່ານທີ່ຈະຊອກຫາບ່ອນຮຽນອື່ນທີ່ ເໝາະສົມສໍາລັບລູກຂອງທ່ານຖ້າທ່ານຕ້ອງການໃຫ້ພວກເຂົາສືບຕໍ່ການສຶກສາ. ທ່ານສາມາດຕິດຕໍ່ໂຮງຮຽນໄດ້ ຖ້າທ່ານຕ້ອງການຄໍາແນະນໍາກ່ຽວກັບທາງເລືອກທີ່ເປັນໄປໄດ້.

ທີ່ຄັດຕິດມາແມ່ນຂໍ້ມູນກ່ຽວກັບສິ່ງທີ່ທ່ານຕ້ອງການຮູ້ຖ້າລູກຂອງທ່ານຖືກໄລ່ອອກຈາກໂຮງຮຽນ.

ຖ້າຫາກທ່ານມີຄວາມຫຍຸ້ງຍາກໃນການເຂົ້າໃຈຈົດໝາຍທີ່ຄັດຕິດມານີ້, ກະລຸນາຕິດຕໍ່ຫາໂຮງຮຽນເພື່ອໃຫ້ພວກເຮົາອະທິບາຍໄດ້. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອຈາກນາຍພາສາໃນເວລາຕິດຕໍ່ໂຮງຮຽນ, ກະລຸນາໂທຫາ ເບີ 131 450 ແລະຂໍເອົານາຍພາສາທີ່ປາກພາສາຂອງທ່ານ. ບອກຜູ້ຮັບສາຍເບີໂທລະສັບທີ່ທ່ານຕ້ອງການໂທຫາ ແລະ ພວກເຂົາຈະຫານາຍພາສາໃນສາຍເພື່ອຊ່ວຍໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.

ຊື່ຂອງທ່ານຄູໃຫຍ່
Name of Principal

ເບີໂທລະສັບຂອງທ່ານຄູໃຫຍ່
Principal’s phone number